ກວດສອບ-ສອບທຽບໂຮງງານຜະລິດນໍ້າດື່ມຢູ່ພາຍໃນແຂວງບໍ່ແກ້ວ
Written by Administrator
Tuesday, 11 June 2019 01:28 - Last Updated Tuesday, 11 June 2019 02:17
ຂະແໜງ ມາດຕະຖານ ແລະ ວັດແທກ (ພວຕ ແຂວງບໍ່ແກ້ວ) ລົງຕິດຕາມ, ກວດກາ, ກວດສອບ-ສອບທຽບ
ບັນດາໂຮງງານຜະລິດນໍ້າດື່ມ ຢູ່ພາຍໃນເທດສະບານແຂວງບໍ່ແກ້ວ.

ເພື່ອເຮັດໃຫ້ສັງຄົມມີຄວາມຍຸທໍາ ລະຫວ່າງຜູ້ຊື້-ຜູ້ຂາຍ, ຜູ້ບໍລິໂພກ ແລະ ຜູ້ອຸປະໂພກ
ມີຄວາມເປັນເອກະພາບກັນ. ໃນວັນທີ 10 ມິຖຸນາ 2019 ຂະແໜງ ມາດຕະຖານ ແລະ ວັດແທກ
ໄດ້ລົງປະສານສົມທົບກັບ ເຈົ້າຂອງໂຮງງານ
ແຕ່ລະບ່ອນເພື່ອກວດກາຜະລິດຕະພັນນໍ້າດື່ມທີ່ໂຮງງານໄດ້ຜະລິດແລະ
ຈໍາໜ່າຍນໍ້າດື່ມໃນແຕ່ລະ ຂະໜາດບັນຈຸ ເພື່ອວັດແທກຄວາມຈຸຂອງນໍ້າ
ວ່າມັນໄດ້ມາດຕະຖານຕາມການໂຄສະນາທີ່ສະຫຼາກໄດ້ກໍານົດໄວ້ແລ້ວບໍ່.
ໃນນີ້ໂຮງງານນໍ້າດື່ມດອກເກດ ກໍ່ເປັນໂຮງງານໜຶ່ງ ທີ່ຕັ້ງຢູ່ບ້ານ ມົກກະຈອກ,
ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ ທີ່ສາມາດຜະລິດນໍ້າດຶ່ມ
ຮັບໃຊ້ບໍລິການສັງຄົມໃນທົ່ວເທດສະບານແຂວງ ທີ່ມີຫຼາຍຂະໜາດບັນຈຸ ເຊັ່ນ ຂະໜາດ 300 ມລ,
150 ມລ, 18 ມລ ແລະ 20 ມລ; ເຊິ່ງການກວດກາຕົວຈິງຕາມຫຼັກການວິຊາການ ເຫັນວ່າ ຂະໜາດບັນຈຸ
ຂອງແຕ່ລະຂະໜາດ ແມ່ນມີຄວາມຈຸທີ່ໃກ້ຄຽງຕາມມາດຕະຖານທີ່ນໍານົດໄວ້ ແລະ
ເຈົ້າຂອງໂຮງງານໄດ້ໃຫ້ຮູ້ວ່າ ຂະບວນການຜະລິດນໍ້າດື່ມ
ແມ່ນໄດ້ຜ່ານຫຼາຍຂັ້ນຕອນໂດຍສະເພາະຜ່ານການກັນຕອງຂອງລະບົບໂອໂຊນ ແລະ
ສະຖານທີ່ກວ້າງຂວາງ ເປັນມິດຕໍ່ສິງແວດລ້ອມ.
ການລົງກວດກາຄັ້ງນີ້ ເຂົ້າຮ່ວມຂອງທ່ານ ໄພວັນ ສ້ອຍທອງ ຮອງຫົວໜ້າ ພະແນກ ວິທະຍາສາດ ແລະ
ເຕັກໂນໂລຊີ, ທ່ານ ກອງມີສຸດເທດລັດ ຫົວໜ້າ ຂະແໜງ ມາດຕະຖານ ແລະ ວັດແທກ ພ້ອມດ້ວຍວິຊາການ
ທີ່ກ່ຽວຂ້ອງ.
 1 / 2

ກວດສອບ-ສອບທຽບໂຮງງານຜະລິດນໍ້າດື່ມຢູ່ພາຍໃນແຂວງບໍ່ແກ້ວ
Written by Administrator
Tuesday, 11 June 2019 01:28 - Last Updated Tuesday, 11 June 2019 02:17

ຂ່າວ ແລະ ພາບໂດຍ: ປະກາສິດ ທຳມະວົງ
 2 / 2